# ຄວາມແຕກຕ່າງລະຫວ່າງ Family Care, Partnership ແລະ PACE

**(Differences Between Family Care, Partnership, and PACE)**

ADRC
Aging & Disability Resource Center

ເອກະສານນີ້ຈະອະທິບາຍເຖິງຄວາມແຕກຕ່າງລະຫວ່າງບັນດາໂຄງການເບິ່ງແຍງດູແລໄລຍະຍາວແບບມີການຄຸ້ມຄອງເຫຼົ່ານີ້:

- Family Care
- Partnership
- PACE (Program of All-Inclusive Care for the Elderly (ໂຄງການການເບິ່ງແຍງດູແລຜູ້ສູງອາຍຸແບບຄົບວົງຈອນ))

ທ່ານສາມາດລົງທະບຽນເຂົ້າໂຄງການເບິ່ງແຍງດູແລໄລຍະຍາວແບບມີການຄຸ້ມຄອງໄດ້ຄັ້ງລະໜຶ່ງໂຄງການ. ໝົດທຸກໂຄງການແມ່ນດ້ວຍຄວາມສະໝັກໃຈ. ຄວາມສະໝັກໃຈ ໝາຍຄວາມວ່າທ່ານສາມາດເລືອກວ່າຈະລົງທະບຽນ ຫຼື ບໍ່. ທ່ານສາມາດເລືອກທີ່ຈະປ່ຽນໄປຍັງໂຄງການອື່ນ, ອົງກອນເບິ່ງແຍງດູແລແບບມີການຄຸ້ມຄອງອື່ນ ຫຼື ອອກຈາກໂຄງການໄດ້ທຸກເວລາ.

**ໝາຍເຫດ:** Partnership ແລະ PACE ແມ່ນບໍ່ໄດ້ມີໃຫ້ຢູ່ໃນທຸກຄາວຕີ້ໃນລັດ Wisconsin. ຖາມ ສູນ ADRC (Aging and Disability Resource Center (ສູນແຫຼ່ງຊັບພະຍາກອນສຳລັບຜູ້ສູງອາຍຸ ແລະ ຄົນພິການ)) ຫຼື ສູນ Tribal ADRS (aging and disability resource specialist (ຜູ້ຊ່ຽວຊານດ້ານແຫຼ່ງຊັບພະຍາກອນສຳລັບຜູ້ສູງອາຍຸ ແລະ ຄົນພິການ)) ປະຈຳຊົນເຜົ່າ ກ່ຽວກັບທາງເລືອກຕ່າງໆທີ່ຢູ່ໃກ້ທ່ານ.

## ການບໍລິການຕ່າງໆ

Family Care ໃຫ້ການບໍລິການເບິ່ງແຍງດູແລໄລຍະຍາວ ສຳລັບຜູ້ໃຫຍ່ທີ່ເປັນຜູ້ສູງອາຍຸ ແລະ ຜູ້ໃຫຍ່ທີ່ມີຄວາມພິການທີ່ຫຼາກຫຼາຍ. Partnership ແລະ PACE ໃຫ້ການບໍລິການເບິ່ງແຍງດູແລໄລຍະຍາວແບບດຽວກັນກັບທີ່ Family Care ສະໜອງໃຫ້. ນອກຈາກນັ້ນ, Partnership ແລະ PACE ກໍຍັງໃຫ້ການບໍລິການດ້ານສຸຂະພາບ ແລະ ດ້ານການແພດ ແລະ ຢາຕາມໃບສັ່ງແພດອີກດ້ວຍ.

ທ່ານສາມາດຕັດສິນໃຈເລືອກໂຄງການໃດໜຶ່ງ ໂດຍອີງໃສ່ການບໍລິການທີ່ທ່ານຕ້ອງການ.

### ຖາມຕົວທ່ານເອງ:

- ຂ້າພະເຈົ້າຕ້ອງການທີມງານໜຶ່ງເພື່ອປະສານງານການບໍລິການດ້ານສຸຂະພາບ ແລະ ດ້ານການແພດຂອງຂ້າພະເຈົ້າບໍ?
- ຂ້າພະເຈົ້າມີການບົ່ງມະຕິພະຍາດ ຫຼື ສະພາວະທີ່ຊັບຊ້ອນຫຼາຍກວ່າໜຶ່ງຢ່າງບໍ?
- ຂ້າພະເຈົ້າກິນຢາຫຼາຍ ຫຼື ບໍ?
- ຂ້າພະເຈົ້າຈຳເປັນຕ້ອງໄດ້ໄປໂຮງໝໍຫຼາຍເທື່ອບໍ?

ຖ້າວ່າທ່ານຕອບ "ແມ່ນ" ຕໍ່ຂໍ້ໃດໜຶ່ງຂອງຄຳຖາມເຫຼົ່ານີ້, Partnership ຫຼື PACE ອາດຈະເປັນທາງເລືອກທີ່ດີກວ່າສຳລັບທ່ານ.



## ຄຳສັບທີ່ຄວນຈະຮູ້

**ການເບິ່ງແຍງດູແລໄລຍະຍາວ**—ນີ້ແມ່ນການບໍລິການ ຫຼື ການຊ່ວຍເຫຼືອທີ່ທ່ານອາດຈະຕ້ອງການ ເນື່ອງຈາກຢ່າງໜ້ອຍໜຶ່ງສາເຫດຕໍ່ໄປນີ້:

- ທ່ານມີຄວາມພິການ.
- ທ່ານມີອາຍຸ 65 ປີຂຶ້ນໄປ (55 ປີຂຶ້ນໄປສຳລັບ PACE).
- ທ່ານມີສະພາວະເຈັບເປັນຊຳເຮື້ອ ຫຼື ຍາວນານ.
- ທ່ານຕ້ອງການຄວາມຊ່ວຍເຫຼືອໃນດ້ານວຽກງານປະຈຳວັນ ເຊັ່ນ: ການນຸ່ງເຄື່ອງ ຫຼື ການອາບນ້ຳ.

**ການບໍລິການດ້ານສຸຂະພາບ ແລະ ດ້ານການແພດ**—ການບໍລິການເຫຼົ່ານີ້ແມ່ນການບໍລິການຈາກທ່ານໝໍ, ພະຍາບານ ຫຼື ຜູ້ໃຫ້ບໍລິການດ້ານການແພດທີ່ມີຄຸນວຸດທິອື່ນໆ ໄດ້ແກ່:

- ການປ້ອງກັນພະຍາດ.
- ການຮັກສາສຸຂະພາບ.
- ການໃຫ້ຄວາມຮູ້ແກ່ຄົນເຈັບ.

**ຢາຕາມໃບສັ່ງແພດ**— ຢາເຫຼົ່ານີ້ລວມທັງການບໍລິການຢາຂອງ Medicaid ແລະ Medicare ທັງໝົດ. ສະມາຊິກ Partnership ແລະ PACE ບໍ່ຈຳເປັນຕ້ອງມີແຜນຢາຂອງ Medicare Part D ແຍກຕ່າງຫາກ.

## ທີມງານເບິ່ງແຍງດູແລ

ແຕ່ລະໂຄງການຈະມີທີມງານເບິ່ງແຍງດູແລ. ສະມາຊິກໃນທີມງານເບິ່ງແຍງດູແລຈະແຕກຕ່າງກັນໄປຕາມໂຄງການ.

### ຖາມຕົວທ່ານເອງ:

ມັນມີຄວາມສຳຄັນກັບຂ້າພະເຈົ້າບໍວ່າໃຜຈະຢູ່ໃນທີມງານເບິ່ງແຍງດູແລຂອງຕົນ?

### Family Care

- ທ່ານ
- ຜູ້ຈັດການໃນການເບິ່ງແຍງດູແລ
- ພະຍາບານອາຊີບ
- ສະມາຊິກໃນຄອບຄົວ ຫຼື ຄົນຮັກຄົນແພງ *(ບໍ່ບັງຄັບ)*
- ຜູ້ຊ່ຽວຊານອື່ນໆ, ໂດຍຂຶ້ນຢູ່ກັບຄວາມຕ້ອງການຂອງທ່ານ ເຊັ່ນ: ພະນັກງານເບິ່ງແຍງດູແລສ່ວນຕົວ *(ບໍ່ບັງຄັບ)*

### Partnership

- ທ່ານ
- ພະຍາບານປິ່ນປົວ
- ຜູ້ຈັດການໃນການເບິ່ງແຍງດູແລ
- ພະຍາບານອາຊີບ
- ສະມາຊິກໃນຄອບຄົວ ຫຼື ຄົນຮັກຄົນແພງ *(ບໍ່ບັງຄັບ)*
- ຜູ້ຊ່ຽວຊານອື່ນໆ, ໂດຍຂຶ້ນຢູ່ກັບຄວາມຕ້ອງການຂອງທ່ານ ເຊັ່ນ: ພະນັກງານເບິ່ງແຍງດູແລສ່ວນຕົວ *(ບໍ່ບັງຄັບ)*

### PACE

- ທ່ານ
- ທ່ານໝໍຂອງ PACE (ຫຼ ທ່ານໝໍຊຸມຊົນ)
- ພະຍາບານອາຊີບ
- ຜູ້ຈັດການໃນການເບິ່ງແຍງດູແລ
- ຜູ້ປະສານງານຂອງສູນ PACE
- ຜູ້ປະສານງານການເບິ່ງແຍງດູແລເຖິງບ້ານ
- ນັກກາຍຍະບຳບັດ, ກິດຈະກຳບຳບັດ ແລະ ນັນທະນາການບຳບັດ
- ນັກໂພຊະນາການ
- ສະມາຊິກໃນຄອບຄົວ ຫຼື ຄົນຮັກຄົນແພງ *(ບໍ່ບັງຄັບ)*
- ຜູ້ຊ່ຽວຊານອື່ນໆ, ໂດຍຂຶ້ນຢູ່ກັບຄວາມຕ້ອງການຂອງທ່ານ ເຊັ່ນ: ພະນັກງານເບິ່ງແຍງດູແລສ່ວນຕົວ *(ບໍ່ບັງຄັບ)*

**ໝາຍເຫດ:** ຖ້າບຸກຄົນໃດໜຶ່ງເປັນຄົນຕັດສິນທາງເລືອກຕາມກົດໝາຍໃນນາມຂອງທ່ານ ເຊັ່ນ: ຜູ້ປົກຄອງ, ຜູ້ກ່ຽວກໍຈະໄດ້ມາເປັນສ່ວນໜຶ່ງຂອງທີມງານເບິ່ງແຍງດູແລຂອງທ່ານອີກດ້ວຍ.

## ຜູ້ໃຫ້ບໍລິການ ແລະ ສະຖານພະຍາບານ

ໂຄງການບາງອັນຈະປະກອບມີທ່ານໝໍ ຫຼື ສະຖານເບິ່ງແຍງດູແລສຸຂະພາບໃນເຄືອຂ່າຍຂອງຕົນທີ່ແນ່ນອນ.

### ຖາມຕົວທ່ານເອງ:

- ການຮັກສາທ່ານໝໍຄົນປັດຈຸບັນຂອງຂ້າພະເຈົ້າໄວ້ແມ່ນມີຄວາມສຳຄັນເທົ່າໃດ?
- ຂ້າພະເຈົ້າຕ້ອງການທາງເລືອກໃນສະຖານພະຍາບານທີ່ຂ້າພະເຈົ້ານຳໃຊ້ບໍ?

Family Care ບໍ່ໄດ້ຈ່າຍຄ່າບໍລິການປະຖົມພະຍາບານ, ດັ່ງນັ້ນທ່ານຈຶ່ງຄວນໃຊ້ທ່ານໝໍຂອງທ່ານເອງ. ທີມງານເບິ່ງແຍງດູແລຂອງທ່ານສາມາດຊ່ວຍທ່ານໃນການສົນທະນາ ແລະ ຊອກຫາຜູ້ໃຫ້ບໍລິການ ແລະ ການບໍລິການປະຖົມພະຍາບານ ຖ້າຈຳເປັນ.

ດ້ວຍ Partnership ແລະ PACE, ທ່ານຈະໃຊ້ບໍລິການທ່ານໝໍທີ່ຢູ່ໃນເຄືອຂ່າຍຜູ້ໃຫ້ບໍລິການຂອງອົງກອນການເບິ່ງແຍງດູແລແບບມີການຄຸ້ມຄອງຂອງທ່ານ. ທ່ານໝໍຄົນປັດຈຸບັນຂອງທ່ານອາດຈະຢູ່ໃນເຄືອຂ່າຍ ຫຼື ອາດຈະຕົກລົງທີ່ຈະເຂົ້າຮ່ວມ.

ດ້ວຍ PACE, ການບໍລິການສ່ວນໃຫຍ່ແມ່ນຈະສະໜອງໃຫ້ຢູ່ສູນ PACE.

### ສຶກສາເພີ່ມເຕີມ

ສູນ ADRC ປະຈຳທ້ອງຖິ່ນ ຫຼື ສູນ Tribal ADRS ສາມາດຊ່ວຍທ່ານຕັດສິນໃຈວ່າໂຄງການໃດຈະດີທີ່ສຸດສຳລັບທ່ານ.

- ຊອກຫາສູນ ADRC ປະຈຳທ້ອງຖິ່ນຂອງທ່ານ (dhs.wisconsin.gov/adrc/consumer/index.htm).
- ຊອກຫາສູນ Tribal ADRS (dhs.wisconsin.gov/adrc/consumer/tribes.htm).

### ໝາຍເຫດ: